ກະຊວງສຶກສາ ຣັດ NSW

Behaviour code for students
Information for students and parents or carers

# ລະຫັດຄວາມປະພຶດສຳລັບນັກຮຽນ

## ຂໍ້ມູນສຳລັບນັກຮຽນ ແລະ ພໍ່ແມ່ ຫຼື ຜູ້ດູແລ

ໂຮງຮຽນຂອງ ຣັດ NSW ມຸ່ງໝັ້ນທີ່ຈະສະໜອງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ, ສະໜັບສະໜູນ ແລະ ຕອບສະໜອງໃຫ້ແກ່ທຸກຄົນໃນທຸກສະພາບແວດລ້ອມ. ພວກເຮົາສອນແລະເປັນແບບຢ່າງຄວາມປະພຶດທີ່ກວມລວມແລະປອດໄພທີ່ພວກເຮົາໃຫ້ຄວາມສຳຄັນຕໍ່ນັກຮຽນຂອງພວກເຮົາ.

### ໃນໂຮງຮຽນ ຣັດ NSW ນັກຮຽນຖືກຄາດຫວັງໃຫ້ເຮັດສຸດຄວາມສາມາດຂອງເຂົາເຈົ້າ, ໃນການ:

- ສະແດງຄວາມເຄົາລົບຕໍ່ນັກຮຽນຄົນອື່ນ, ຄູສອນ ແລະ ພະນັກງານໂຮງຮຽນ ແລະ ສະມາຊິກຊຸມຊົນ
- ປະຕິບັດຕາມກົດລະບຽບຂອງໂຮງຮຽນ ແລະ ຫ້ອງຮຽນ ແລະປະຕິບັດຕາມຄຳແນະນຳຂອງຄູສອນຂອງເຂົາເຈົ້າ
- ພະຍາຍາມໃຫ້ມີມາດຕະຖານສູງສຸດໃນການຮຽນຮູ້
- ປະຕິບັດຕົນຢ່າງສຸພາບ ແລະ ໃຫ້ຄວາມເຄົາລົບເຊິ່ງເຮັດໃຫ້ສະມາຊິກທຸກຄົນໃນຊຸມຊົນຂອງໂຮງຮຽນມີຄວາມຮູ້ສຶກມີຄຸນຄ່າ, ມີສ່ວນຮ່ວມ ແລະໄດ້ຮັບການສະໜັບສະໜູນ
- ແກ້ໄຂຂໍ້ຂັດແຍ່ງດ້ວຍຄວາມເຄົາລົບ, ສະຫງົບ ແລະ ຍຸຕິທຳ
- ປະຕິບັດຕາມນະໂຍບາຍເຄື່ອງແບບ ຫຼື ລະບຽບການແຕ່ງຕົວຂອງໂຮງຮຽນຕາມທີ່ໄດ້ຕົກລົງກັນ
- ເຂົ້າໂຮງຮຽນທຸກໆມື້ (ເວັ້ນເສຍແຕ່ໄດ້ຮັບການຍົກເວັ້ນຕາມກົດໝາຍ)
- ເຄົາລົບຊັບສິນທັງໝົດ
- ປອດໄພ ແລະ ບໍ່ໃຊ້ຄວາມຮຸນແຮງ ຫຼື ນຳເອົາອາວຸດ, ຢາເສບຕິດທີ່ຜິດກົດໝາຍ, ເຫຼົ້າ, ກອກຢາໄຟຟ້າ ຫຼື ຢາສູບເຂົ້າມາໂຮງຮຽນຂອງພວກເຮົາ.
- ບໍ່ກັ່ນແກ້ງ, ຂົ່ມເຫັງ, ຂົ່ມຂູ່, ຫຼື ຈຳແນກຕໍ່ໃຜຜູ້ໜຶ່ງຢູ່ໃນໂຮງຮຽນຂອງພວກເຮົາ.

ໂຮງຮຽນດຳເນີນການເພື່ອຕອບໂຕ້ຕໍ່ຄວາມປະພຶດທີ່ເປັນອັນຕະລາຍຕໍ່ຕົນເອງຫຼືຜູ້ອື່ນ ຫຼືຕໍ່ຜົນສຳເລັດຂອງການສິດສອນແລະການຮຽນຮູ້ຄຸນນະພາບສູງ.

### ນັກຮຽນທຸກຄົນມີສິດທີ່ຈະ:

- ມີຄວາມປອດໄພຢູ່ໂຮງຮຽນ
- ເຂົ້າເຖິງ ແລະ ມີສ່ວນຮ່ວມຢ່າງເຕັມສ່ວນໃນການຮຽນຮູ້ຂອງເຂົາເຈົ້າ
- ໄດ້ຮັບການເຄົາລົບນັບຖືຈາກນັກຮຽນ, ຄູສອນ ແລະ ພະນັກງານໂຮງຮຽນອື່ນໆ
- ສະແດງທັດສະນະຂອງເຂົາເຈົ້າ, ກຳນົດເປົ້າໝາຍແລະສະໜັບສະໜູນຕົນເອງ.

ທ່ານຄູໃຫຍ່ແລະພະນັກງານໂຮງຮຽນໃຊ້ຄຳພິຈາລະນາແບບມືອາຊີບຂອງເຂົາເຈົ້າທີ່ດີທີ່ສຸດເພື່ອຮັກສາລະບຽບວິໄນແລະສະໜອງສະພາບແວດລ້ອມການ ຮຽນຮູ້ທີ່ປອດໄພ, ສະໜັບສະໜູນແລະຕອບສະໜອງແລະນຳໃຊ້ການປະຕິບັດທີ່ເໝາະສົມໃນເວລາທີ່ນັກຮຽນບໍ່ຕອບສະໜອງຕໍ່ຄວາມຄາດຫວັງເຫຼົ່ານີ້.

ກະຊວງມີຄວາມຮັບຜິດຊອບໃນການສະໜອງກອບນະໂຍບາຍແລະຊັບພະຍາກອນເຊັ່ນຂ່າວສານກ່ຽວກັບບັນຫາດ້ານກົດໝາຍ, ການເຂົ້າເຖິງຄຳແນະນຳຂອງຜູ້ຊ່ຽວຊານ ແລະ ການຮຽນຮູ້ທາງວິຊາຊີບເພື່ອເປັນແນວທາງໃຫ້ແກ່ທ່ານຄູໃຫຍ່ ແລະ ພະນັກງານໃນການພິຈາລະນາແບບມືອາຊີບຂອງເຂົາເຈົ້າ.

ໃນສະພາບການນີ້, ລັດຖະບານ ຣັດ NSW ແລະ ກະຊວງສຶກສາຈະສະໜັບສະໜູນສິດອຳນາດແລະການຕັດສິນຂອງທ່ານຄູໃຫຍ່ ແລະ ພະນັກງານໂຮງຮຽນໃນລະດັບທ້ອງຖິ່ນ.

### ລະຫັດຄວາມປະພຶດສຳລັບນັກຮຽນ: ການກະທຳຂອງນັກຮຽນ

ການສົ່ງເສີມການກວມລວມ ການຮຽນຮູ້ ຄວາມເປັນຢູ່ທີ່ດີ ແລະ ຄວາມປອດໄພຂອງນັກຮຽນທຸກຄົນໃນໂຮງຮຽນຂອງ ຣັດ NSW ແມ່ນບູລິມະສິດສູງສຳລັບກະຊວງສຶກສາ.

ພວກເຮົາໃຊ້ວິທີການສິດສອນ ແລະ ການຮຽນຮູ້ໃນທົ່ວສະພາບແວດລ້ອມຕ່າງໆເພື່ອສະໜັບສະໜູນການພັດທະນາທັກສະທີ່ນັກຮຽນຕ້ອງການເພື່ອໃຫ້ໄດ້ຕາມມາດຕະຖານລະດັບສູງຂອງ ພວກເຮົາໃນດ້ານຄວາມປະພຶດທີ່ໃຫ້ຄວາມເຄົາລົບ ຄວາມປອດໄພ ແລະ ມີສ່ວນຮ່ວມ.

**ເພື່ອໃຫ້ເປັນໄປຕາມຄວາມຄາດຫວັງທີ່ໄດ້ກຳນົດໄວ້ຂ້າງເທິງ ນັກຮຽນໃນໂຮງຮຽນຂອງ ຣັດ NSW, ຄວນປະຕິບັດຕາມຫຼັກການຕໍ່ໄປນີ້ຢ່າງເຕັມຄວາມສາມາດ.**

### ເຄົາລົບ

- ປະຕິບັດຕໍ່ກັນດ້ວຍກຽດສັກສີ.
- ຕິດຕໍ່ສື່ສານ ແລະ ປະພຶດຕົນຢ່າງສຸພາບ.
- ປະຕິບັດ ແລະ ເຮັດວຽກຮ່ວມກັບນັກຮຽນ ຄູສອນ ແລະ ພະນັກງານໂຮງຮຽນຄົນອື່ນໆ.
- ພັດທະນາສາຍພົວພັນທາງບວກ ແລະ ໃຫ້ຄວາມເຄົາລົບ.
- ໃຫ້ຄຸນຄ່າຜົນປະໂຫຍດ, ຄວາມສາມາດ ແລະ ວັດທະນະທຳຂອງຄົນອື່ນ.
- ເຄົາລົບຄວາມຕ້ອງການການຮຽນຮູ້ຂອງນັກຮຽນຄົນອື່ນໆ.
- ແຕ່ງຕົວໃຫ້ເໝາະສົມໂດຍການໃສ່ຊຸດເຄື່ອງແບບນັກຮຽນ ຫຼື ລະບຽບການແຕ່ງຕົວທີ່ຕົກລົງກັນ.
- ເບິ່ງແຍງຊັບສິນຂອງໂຮງຮຽນ ແລະ ຊັບສິນຂອງພະນັກງານ ແລະ ນັກຮຽນຄົນອື່ນໆ.

## ຄວາມປອດໄພ

- ເປັນແບບຢ່າງ ແລະ ປະຕິບັດຕາມກົດລະບຽບຂອງໂຮງຮຽນ ແລະ ຫ້ອງຮຽນ ແລະ ຄວາມຄາດຫວັງກ່ຽວກັບຄວາມປະພຶດ ແລະ ພຶດຕິກຳ.
- ເຈລະຈາ ແລະ ແກ້ໄຂຂໍ້ຂັດແຍ່ງ.
- ຮັບຮູ້ ແລະ ຮັບຜິດຊອບຕໍ່ຄວາມປະພຶດ ແລະ ການກະທຳຂອງເຂົາເຈົ້າວ່າມັນສົ່ງຜົນກະທົບຕໍ່ຜູ້ອື່ນແນວໃດ.
- ເບິ່ງແຍງຕົນເອງ ແລະ ຜູ້ອື່ນ.
- ເຮັດໃຫ້ຕົນເອງປອດໄພ ແລະ ຊ່ວຍໃຫ້ຜູ້ອື່ນເລືອກໃນສິ່ງທີ່ປອດໄພ ທີ່ບໍ່ທຳຮ້າຍຕົນເອງ ຫຼື ຜູ້ອື່ນ.

## ການມີສ່ວນພົວພັນ

- ມາຮອດໂຮງຮຽນ ແລະ ເຂົ້າຮຽນຕົງຕາມເວລາ.
- ກຽມພ້ອມສຳລັບທຸກໆບົດຮຽນ.
- ມີສ່ວນຮ່ວມໃນການຮຽນຮູ້ຢ່າງຫ້າວຫັນ.
- ມຸ່ງໝັ້ນ ແລະ ພະຍາຍາມບັນລຸມາດຕະຖານສູງສຸດຂອງການຮຽນຮູ້.

### ບໍລິການນາຍແປພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍໃນການສອບຖາມຂອງທ່ານ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບທີ່ເບີ 131 450 ແລະ ຂໍເອົານາຍພາສາໃນພາສາຂອງທ່ານ.

ບອກຜູ້ຮັບສາຍເຖິງເບີໂທລະສັບທີ່ທ່ານຕ້ອງການຈະໂທຫາແລະ ຜູ້ຮັບສາຍຈະໄດ້ຫານາຍພາສາມາໃນສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.